ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຂໍ້ຕົກລົງ
# ວ່າດ້ວຍການທ່ອງທ່ຽວໃນເຂດປ່າໄມ້

# Decision
# on Tourism in Forest Areas

ກະຊວງ ກະສິກຳ ແລະ ປ່າໄມ້
ເລກທີ 1926/ກປ
ນະຄອນຫຼວງວຽງຈັນ, ວັນທີ 03 ມິຖຸນາ 2025

Ministry of Agriculture and Forestry
No. 1926/MAF
Vientiane Capital, 03 Jun 2025

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຂໍ້ຕົກລົງ
# ວ່າດ້ວຍການທ່ອງທ່ຽວໃນເຂດປ່າໄມ້

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 1926/ກປ

ນະຄອນຫຼວງວຽງຈັນ, ວັນທີ 03 ມິຖຸນາ 2025

## ສາລະບານ


**ໝວດທີ 1 ບົດບັນຍັດທົ່ວໄປ ........ 1**

*ມາດຕາ 1 ຈຸດປະສົງ ........ 1*

*ມາດຕາ 2 ການທ່ອງທ່ຽວໃນເຂດປ່າໄມ້ ........ 1*

*ມາດຕາ 3 ການອະທິບາຍຄຳສັບ ........ 1*

*ມາດຕາ 4 ຫຼັກການກ່ຽວກັບການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ ........ 2*

*ມາດຕາ 5 ຂອບເຂດການນຳໃຊ້ ........ 2*

**ໝວດທີ 2 ຮູບແບບການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ ........ 3**

*ມາດຕາ 6 ຮູບແບບການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ ........ 3*

*ມາດຕາ 7 ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບການເຊົ່າ ຫຼື ສຳປະທານ ........ 3*

*ມາດຕາ 8 ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ........ 3*

**ໝວດທີ 3 ເງື່ອນໄຂ ແລະ ຂັ້ນຕອນ ການດຳເນີນກິດຈະການການທ່ອງທ່ຽວ ໃນເຂດປ່າໄມ້ແບບສັນຍາຮ່ວມມື ........ 4**

*ມາດຕາ 9 ເງື່ອນໄຂການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ........ 4*

*ມາດຕາ 10 ເງື່ອນໄຂລວມ ........ 4*

*ມາດຕາ 11 ເງື່ອນໄຂດ້ານພື້ນທີ່ ........ 4*

*ມາດຕາ 12 ເງື່ອນໄຂຜູ້ປະກອບການ ........ 4*

*ມາດຕາ 13 ເງື່ອນໄຂຂຸມຊົນ ........ 5*

*ມາດຕາ 14 ຂັ້ນຕອນການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ........ 5*

*ມາດຕາ 15 ການສະເໜີ ........ 5*

*ມາດຕາ 16 ການສຶກສາຄວາມເປັນໄດ້ ........ 6*

*ມາດຕາ 17 ການກະກຽມສັນຍາຮ່ວມມື ........ 6*

*ມາດຕາ 18 ການອະນຸມັດເຊັນສັນຍາຮ່ວມມື ........ 6*

*ມາດຕາ 19 ການເຊັນສັນຍາຮ່ວມມື ........ 7*

*ມາດຕາ 20 ການຈັດຕັ້ງປະຕິບັດສັນຍາຮ່ວມມື ........ 7*

*ມາດຕາ 21 ການປະເມີນຜົນການຈັດຕັ້ງປະຕິບັດສັນຍາຮ່ວມມື ........ 7*

*ມາດຕາ 22 ການໂຈະ ແລະ ການປ່ຽນແປງສັນຍາຮ່ວມມື ........ 7*

*ມາດຕາ 23 ການຍົກເລີກ ແລະ ການສິ້ນສຸດສັນຍາ ........ 8*

**ໝວດທີ 4 ການຄຸ້ມຄອງ ແລະ ນຳໃຊ້ລາຍຮັບຈາກການທ່ອງທ່ຽວ ໃນເຂດປ່າໄມ້ແບບສັນຍາຮ່ວມມື ........ 8**

*ມາດຕາ 24 ແຫຼ່ງລາຍຮັບ ........ 8*

*ມາດຕາ 25 ການຄຸ້ມຄອງລາຍຮັບ ........ 8*

*ມາດຕາ 26 ການນຳໃຊ້ລາຍຮັບ ........ 9*

*ມາດຕາ 27 ການແບ່ງປັນລາຍຮັບ ........ 9*

**ໝວດທີ 5 ຂໍ້ຫ້າມ ........ 10**

*ມາດຕາ 28 ຂໍ້ຫ້າມທົ່ວໄປ ........ 10*

*ມາດຕາ 29 ຂໍ້ຫ້າມສຳລັບນັກທ່ອງທ່ຽວ ........ 10*

*ມາດຕາ 30 ຂໍ້ຫ້າມສຳລັບຜູ້ປະກອບການ ........ 10*

*ມາດຕາ 31 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ........ 11*

**ໝວດທີ 6 ການຄຸ້ມຄອງ ແລະ ການກວດກາວຽກງານ ທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ........ 11**

*ມາດຕາ 32 ການຄຸ້ມຄອງວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ...... 11*
*ມາດຕາ 33 ສິດ ແລະ ໜ້າທີ່ ຂອງກົມປ່າໄມ້ ...... 11*
*ມາດຕາ 34 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ...... 12*
*ມາດຕາ 35 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ...... 12*
*ມາດຕາ 36 ສິດ ແລະ ໜ້າທີ່ ຂອງກອງຄຸ້ມຄອງປ່າສະຫງວນ-ປ່າປ້ອງກັນຂັ້ນແຂວງ, ກອງຄຸ້ມຄອງອຸທິຍານແຫ່ງ ຊາດ ແລະ ກອງຄຸ້ມຄອງປ່າສະຫງວນແຫ່ງຊາດ ...... 13*
*ມາດຕາ 37 ສິດ ແລະ ໜ້າທີ່ ຂອງການຈັດຕັ້ງບ້ານ ...... 13*
*ມາດຕາ 38 ເນື້ອໃນກວດກາ ...... 14*
*ມາດຕາ 39 ຮູບການການກວດກາ ...... 14*
*ມາດຕາ 40 ການແກ້ໄຂຂໍ້ຂັດແຍ່ງ ...... 14*

**ໝວດທີ 7 ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ...... 14**

*ມາດຕາ 41 ນະໂຍບາຍຕໍ່ຜູ້ມີຜົນງານ ...... 14*
*ມາດຕາ 42 ມາດຕະການຕໍ່ຜູ້ລະເມີດ ...... 15*

**ໝວດທີ 8 ບົດບັນຍັດສຸດທ້າຍ ...... 15**

*ມາດຕາ 43 ການຈັດຕັ້ງປະຕິບັດ ...... 15*
*ມາດຕາ 44 ຜົນສັກສິດ ...... 15*

**ແບບພິມ 1 ...... 16**

**ແບບພິມ 2 ...... 26**

**ເອກະສານສະຫນັບສະຫນູນ ແບບພິມ 2 ...... 30**

**ແບບພິມ 3 ...... 42**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1926 /ກປ

ນະຄອນຫຼວງວຽງຈັນ, ວັນທີ 03 JUN 2025

# ຂໍ້ຕົກລົງ
## ວ່າດ້ວຍການທ່ອງທ່ຽວໃນເຂດປ່າໄມ້

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 2665/ກປມ, ລົງວັນທີ 20 ພຶດສະພາ 2025;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 2252 /ຫກ, ລົງວັນທີ 29 ພຶດສະພາ 2025.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານທ່ອງທ່ຽວໃນເຂດປ່າໄມ້ ເພື່ອສົ່ງເສີມ ແລະ ພັດທະນາການທ່ອງທ່ຽວ ທີ່ຕິດພັນກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ມີຄວາມຍືນຍົງ ແນໃສ່ ສ້າງກົນໄກການເງິນຍືນຍົງ ໃນການຄຸ້ມຄອງປ່າໄມ້, ສ້າງວຽກເຮັດງານທຳ, ເພີ່ມລາຍໄດ້ ໃຫ້ແກ່ ຊຸມຊົນທີ່ອາໄສ ຢູ່ໃນ ແລະ ຕິດກັບເຂດປ່າໄມ້, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ທ້ອງຖິ່ນໃຫ້ເຂັ້ມແຂງ.

**ມາດຕາ 2 ການທ່ອງທ່ຽວໃນເຂດປ່າໄມ້**

ການທ່ອງທ່ຽວໃນເຂດປ່າໄມ້ ແມ່ນການດຳເນີນກິດຈະການການທ່ອງທ່ຽວ ໃນເຂດປ່າໄມ້ ທີ່ລັດຈັດສັນໃຫ້, ບໍ່ສົ່ງຜົນກະທົບອັນບໍ່ດີຕໍ່ ລະບົບນິເວດ ແລະ ສິ່ງແວດລ້ອມ ໂດຍຕິດພັນກັບການອະນຸລັກ ທຳມະຊາດ, ວັດທະນະທຳ, ປະຫວັດສາດ, ສຶກສາຄົ້ນຄວ້າ, ຖ່າຍທຳ ແລະ ອື່ນໆ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ເຂດປ່າໄມ້** ໝາຍເຖິງ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ລັດໄດ້ກຳນົດ ຊຶ່ງປະກອບດ້ວຍ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;

**2. ຜູ້ປະກອບການ** ໝາຍເຖິງ ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນທຸລະກິດການທ່ອງທ່ຽວ ຫຼື ດຳເນີນກິດຈະການອື່ນ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຫຼື ເອກະສານອະນຸຍາດ ຢ່າງຖືກຕ້ອງ ຕາມກົດໝາຍ;

**3. ຊຸມຊົນ** ໝາຍເຖິງ ບ້ານຢູ່ໃນ ຫຼື ບ້ານຕິດກັບເຂດປ່າໄມ້ ທີ່ມີເງື່ອນໄຂຄົບຖ້ວນ ແລະ ໄດ້ເຂົ້າຮ່ວມ ຫຼື ເປັນຄູ່ສັນຍາໃນການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື;

**4. ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້** ໝາຍເຖິງ ກະຊວງກະສິກຳ ແລະ ປ່າ ໄມ້, ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ລວມທັງ ກອງຄຸ້ມຄອງປ່າສະຫງວນ-ປ່າປ້ອງກັນຂັ້ນແຂວງ, ກອງຄຸ້ມຄອງອຸທິຍານແຫ່ງຊາດ ແລະ ກອງຄຸ້ມຄອງປ່າສະຫງວນແຫ່ງຊາດ;

**5. ສັນຍາຮ່ວມມື** ໝາຍເຖິງ ເອກະສານຂໍ້ຜູກພັນສັນຍາ ທີ່ກຳນົດເງື່ອນໄຂ ໂດຍມີການຕົກລົງ ແລະ ເຊັນເປັນລາຍລັກອັກສອນ ຂອງຄູ່ສັນຍາ ລະຫວ່າງ ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້, ຜູ້ປະກອບການ, ຊຸມຊົນ ເພື່ອຮ່ວມກັນດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້;

**6. ທ່ອງທ່ຽວແບບຍືນຍົງ** ໝາຍເຖິງ ການພັດທະນາການຢ່າງເປັນລະບົບ ແລະ ການທ່ອງທ່ຽວ ທີ່ສອດຄ່ອງກັບ ກົດໝາຍ, ລະບຽບການ ແລະ ແຜນພັດທະນາແບບຍືນຍົງ ທີ່ບໍ່ສ້າງຜົນກະທົບທາງລົບ ຕໍ່ ສິ່ງແວດລ້ອມ, ສະຖານທີ່ທ່ອງທ່ຽວ ແລະ ປະຊາຊົນທ້ອງຖິ່ນ;

**7. ການເງິນຍືນຍົງ** ໝາຍເຖິງ ການສ້າງລາຍຮັບຈາກ ການທ່ອງທ່ຽວ ແລະ ກິດຈະກຳອື່ນ ເພື່ອຕອບສະໜອງງົບປະມານ ຄ່າໃຊ້ຈ່າຍໃນການ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເຂດພື້ນທີ່ຢ່າງຕໍ່ເນື່ອງ;

**8. ປີ້ເຂົ້າຊົມ** ໝາຍເຖິງ ບັດ ທີ່ນັກທ່ອງທ່ຽວຕ້ອງຊື້ ເພື່ອເຂົ້າເຂດປ່າໄມ້ ຫຼື ສະຖານທີ່ທ່ອງທ່ຽວ ໂດຍອີງໃສ່ເງື່ອນໄຂ ຂອງແຕ່ລະພື້ນທີ່ ແລະ ປະເພດນັກທ່ອງທ່ຽວ ຊຶ່ງກຳນົດ ເລກທີ, ວັນທີ, ລາຄາ, ກຳນົດເວລາ, ອົງການອອກບັດ ແລະ ເນື້ອໃນອື່ນ ກ່ຽວກັບ ສະຖານທີ່ ຫຼື ແຫຼ່ງທ່ອງທ່ຽວ;

**9. ນັກທ່ອງທ່ຽວ** ໝາຍເຖິງ ບຸກຄົນ ທີ່ເດີນທາງຈາກທີ່ຢູ່ອາໄສຂອງຕົນໄປທ້ອງຖິ່ນອື່ນ ຫຼື ປະ ເທດອື່ນ ເພື່ອການທ່ອງທ່ຽວ, ການຢ້ຽມຢາມ, ການທ່ຽວຊົມ, ການພັກຜ່ອນ, ການມ່ວນຊື່ນ, ການສົ່ງເສີມສຸຂະພາບ, ການສຶກສາຄົ້ນຄວ້າ, ການສະແດງ, ການປະຊຸມ ແລະ ກິດຈະກຳອື່ນ ທີ່ບໍ່ແມ່ນອາໄສຢູ່ປະຈຳ, ຊອກເຮັດວຽກ, ປະກອບອາຊີບ ຫຼື ຫາລາຍໄດ້ໃນຮູບແບບຕ່າງໆ.

**ມາດຕາ 4 ຫຼັກການກ່ຽວກັບການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້**

ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາຂະແໜງການປ່າໄມ້ ໂດຍເຊື່ອມໂຍງກັບ ຂະແໜງການທ່ອງທ່ຽວ ພາຍໃນ, ພາກພື້ນ ແລະ ສາກົນ;

2. ຮັບປະກັນການທ່ອງທ່ຽວໃຫ້ໄປຄຽງຄູ່ກັບການ ປົກປັກຮັກສາສິ່ງແວດລ້ອມ, ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ຂອງຊາດໃຫ້ມີຄວາມຍືນຍົງ;

3. ຮັບປະກັນແຫຼ່ງສະໜອງທຶນແບບຍືນຍົງ ປະກອບສ່ວນໃຫ້ແກ່ການ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ໃຫ້ມີຄຸນນະພາບ, ໄດ້ມາດຕະຖານ ແລະ ມີຜົນກະທົບໜ້ອຍທີ່ສຸດຕໍ່ຊັບພະຍາກອນປ່າໄມ້;

4. ຮັບປະກັນສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງ ນັກທ່ອງທ່ຽວ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງກັບການທ່ອງທ່ຽວໃນເຂດປ່າໄມ້;

5. ຮັບປະກັນທຸກກິດຈະການທ່ອງທ່ຽວ ທີ່ເຄື່ອນໄຫວຢູ່ໃນເຂດປ່າໄມ້ ໄດ້ມີສັນຍາຮ່ວມມື ໂດຍມີການປະສານສົມທົບ ແລະ ຮ່ວມມືກັບ ຂະແໜງການ, ພາກສ່ວນ ທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງປະຊາຊົນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ຊຸມຊົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ ຢູ່ ສປປ ລາວ.

## ໝວດທີ 2
## ຮູບແບບການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້

**ມາດຕາ 6 ຮູບແບບການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້**

ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ ມີ ສອງ ຮູບແບບ ດັ່ງນີ້:

1. ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບການເຊົ່າ ຫຼື ສຳປະທານ;
2. ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື.

**ມາດຕາ 7 ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບການເຊົ່າ ຫຼື ສຳປະທານ**

ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບການເຊົ່າ ຫຼື ສຳປະທານ ແມ່ນການດຳເນີນກິດຈະການການທ່ອງທ່ຽວ ເພື່ອພັດທະນາເປັນສະຖານທີ່ທ່ອງທ່ຽວ ໂດຍຜູ້ປະກອບການທີ່ເປັນ ນິຕິບຸກ ຄົນ ຫຼື ການຈັດຕັ້ງ ຊຶ່ງລັດໄດ້ຈັດສັນ ແລະ ອະນຸຍາດໃຫ້ ເຊົ່າ ຫຼື ສຳປະທານເຂດປ່າໄມ້ ໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ.

ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບການເຊົ່າ ຫຼື ສຳປະທານ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍການທ່ອງທ່ຽວ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍ ແລະ ລະບຽບອື່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນເຈົ້າການຄົ້ນຄວ້ານະໂຍບາຍທີ່ເໝາະສົມ ໃນການແບ່ງປັນຜົນປະໂຫຍດ ລະຫວ່າງ ລັດ, ຜູ້ປະກອບການ, ການຈັດຕັ້ງ, ຊຸມຊົນ ແລະ ປະຊາຊົນທີ່ອາໄສຢູ່ໃນ ຫຼື ຕິດກັບເຂດປ່າໄມ້ ທີ່ມີສ່ວນຮ່ວມໃນການພັດທະນາການທ່ອງທ່ຽວໃນເຂດປ່າໄມ້ ບົນພື້ນຖານ ກົດໝາຍ ແລະ ລະບຽບການວາງອອກ.

**ມາດຕາ 8 ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື**

ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ແມ່ນການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ ຂອງຜູ້ປະກອບການ ຫຼື ຊຸມຊົນ ໂດຍມີສັນຍາຮ່ວມມື ທີ່ກຳນົດເງື່ອນໄຂດ້ານຕ່າງໆ ລວມທັງສິດ, ພັນທະ ແລະ ຜົນປະໂຫຍດຂອງແຕ່ລະຝ່າຍ ເພື່ອພັດທະນາການທ່ອງທ່ຽວແບບອະນຸລັກ ທຳມະຊາດ, ວັດທະນະທຳ, ປະຫວັດສາດ, ສຶກສາຄົ້ນຄວ້າ, ຖ່າຍທຳ ແລະ ອື່ນໆ ຢູ່ໃນເຂດປ່າໄມ້ ທີ່ລັດໄດ້ຈັດສັນໃຫ້, ຜ່ານການປະເມີນຄວາມສ່ຽງ ທີ່ບໍ່ສົ່ງຜົນກະທົບຮ້າຍແຮງຕໍ່ ສິ່ງແວດລ້ອມ, ສັງຄົມ ແລະ ລະບົບນິເວດທຳມະຊາດ.

ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ປະກອບດ້ວຍ:

1. ສັນຍາຮ່ວມມື ລະຫວ່າງ ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້, ຜູ້ປະກອບການ, ແລະ ຊຸມຊົນ ທີ່ອາໄສຢູ່ໃນ ຫຼື ຕິດກັບເຂດປ່າໄມ້ ທີ່ໄດ້ຕົກລົງເງື່ອນໄຂ ແລະ ເຊັນສັນຍາ ເປັນລາຍລັກອັກສອນຮ່ວມກັນ ໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;

2. ສັນຍາຮ່ວມມື ລະຫວ່າງ ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ແລະ ຊຸມຊົນ ທີ່ອາໄສຢູ່ໃນ ຫຼື ຕິດກັບເຂດປ່າໄມ້ ທີ່ໄດ້ຕົກລົງ ເຊັນສັນຍາຮ່ວມກັນ ເປັນລາຍລັກອັກສອນຮ່ວມກັນ ໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;

3. ສັນຍາຮ່ວມມືປະເພດອື່ນ ເປັນຕົ້ນ ຄູ່ສັນຍາທີ່ເປັນ ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກັບຜູ້ປະກອບການ ຫຼື ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກັບຄູ່ສັນຍາທີ່ເປັນອົງການຈັດຕັ້ງ ຊຶ່ງພາໃຫ້ສິດ ແລະ ພັນທະ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ເງື່ອນໄຂ ແລະ ຂັ້ນຕອນ ການດຳເນີນກິດຈະການການທ່ອງທ່ຽວ ໃນເຂດປ່າໄມ້ແບບສັນຍາຮ່ວມມື

**ມາດຕາ 9 ເງື່ອນໄຂການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື**

ເງື່ອນໄຂການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ປະກອບດ້ວຍ:

1. ເງື່ອນໄຂລວມ;
2. ເງື່ອນໄຂພື້ນທີ່;
3. ເງື່ອນໄຂຜູ້ປະກອບການ;
4. ເງື່ອນໄຂຊຸມຊົນ.

**ມາດຕາ 10 ເງື່ອນໄຂລວມ**

ຜູ້ປະກອບການ ແລະ ຊຸມຊົນ ທີ່ຈະດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ຕ້ອງມີຄວາມສະໝັກໃຈ, ບໍ່ມີການບັງຄັບນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ແລະ ຮັບປະກັນການມີສ່ວນຮ່ວມຂອງຄູ່ສັນຍາ ທີ່ເປັນອີງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ພ້ອມທັງກຳນົດເປົ້າໝາຍຂອງສັນຍາຮ່ວມມືໃຫ້ ຊັດເຈນ, ມີຈິງ, ບໍ່ຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສາມາດປະຕິບັດໄດ້ ຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 11 ເງື່ອນໄຂດ້ານພື້ນທີ່**

ພື້ນທີ່ ທີ່ອະນຸຍາດໃຫ້ດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ແມ່ນເຂດທີ່ລັດໄດ້ມີແຜນຈັດສັນ ແລະ ກຳນົດແບ່ງເຂດຄຸ້ມຄອງໃນແຕ່ລະເຂດ ດັ່ງນີ້:

1. ເຂດຫວງຫ້າມເດັດຂາດ ແມ່ນອະນຸຍາດສະເພາະການຍ່າງປ່າ, ການຕັ້ງແຄັມ, ການຂີ່ເຮືອ ແລະ ສາຍສະລິງເລື່ອນ ໂດຍມີຊຸມຊົນເປັນຄູ່ສັນຍາ, ພະນັກງານນຳທ່ຽວທ້ອງຖິ່ນ ທີ່ມີໃບອະນຸຍາດ ແລະ ໄດ້ຜ່ານການຝຶກອົບຮົມພິເສດສະເພາະການເປັນພະນັກງານນຳທ່ຽວທ້ອງຖິ່ນ, ຈຳນວນນັກທ່ອງທ່ຽວ ມີຄວາມເໝາະສົມກັບຄວາມສາມາດຮອງຮັບໄດ້ຂອງເຂດ ແລະ ໃຫ້ມີຜົນກະທົບໜ້ອຍສຸດ. ບໍ່ອະນຸຍາດໃຫ້ມີການກໍ່ສ້າງໂຄງລ່າງພື້ນຖານໃນເຂດຫວງຫ້າມເດັດຂາດ, ຍົກເວັ້ນການກໍ່ສ້າງ ຫ້ອງນ້ຳ, ຕັ້ງແຄັມ, ຄ້າຍພັກ ຫຼື ເຂດພັກກິນເຂົ້າປ່າ ແຕ່ຕ້ອງໃຫ້ມີຜົນກະທົບໜ້ອຍສຸດ ຕາມມາດຕະຖານສາກົນ ໂດຍມີພະນັກງານກວດກາລາດຕະເວນ ເພື່ອດູແລ ແລະ ກວດກາກຸ່ມນັກທ່ອງທ່ຽວໄດ້ທຸກເວລາ ແລະ ມີສິດໃນການປະຕິບັດຕາມລະບຽບຂອງເຂດຫວງຫ້າມເດັດຂາດໄດ້ໃນທຸກກໍລະນີ;

2. ເຂດຄຸ້ມຄອງນຳໃຊ້ ແມ່ນອະນຸຍາດໃຫ້ຕັ້ງທີ່ພັກອາໄສທີ່ມີຜົນກະທົບຕ່ຳ, ການທ່ຽວຊົມ, ຍ່າງປ່າ, ປີນໜ້າຜາ, ການບໍລິການອາຫານ, ເຮືອນພັກ ແລະ ກິດຈະການການທ່ອງທ່ຽວແບບນິເວດອື່ນ ໂດຍມີພະນັກງານນຳທ່ຽວ ທີ່ເປັນຄົນທ້ອງຖິ່ນເປັນຜູ້ນຳທ່ຽວ, ຍົກເວັ້ນການຍ່າງໄລຍະສັ້ນ ຊຶ່ງນັກທ່ອງທ່ຽວ ສາມາດໄປດ້ວຍຕົນເອງ ຕາມການອະນຸຍາດຂອງແຕ່ລະເຂດ. ບໍ່ອະນຸຍາດໃຫ້ກໍ່ສ້າງໂຮງແຮມ, ຄາຊີໂນ ແລະ ໂຄງລ່າງພື້ນຖານອື່ນ ທີ່ສິ່ງຈະຜົນກະທົບສູງຕໍ່ສິ່ງແວດລ້ອມ ເປັນຕົ້ນ ຜົນກະທົບດ້ານລົບຕໍ່ເຂດພູມສັນຖານ, ທິວທັດ ແລະ ທຳມະຊາດ;

3. ເຂດພື້ນທີ່ອື່ນ ທີ່ລັດໄດ້ຈັດສັນໃຫ້ ແມ່ນອະນຸຍາດໃຫ້ດຳເນີນທຸກກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ໂດຍບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ.

**ມາດຕາ 12 ເງື່ອນໄຂຜູ້ປະກອບການ**

ເງື່ອນໄຂຜູ້ປະກອບການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ມີ ດັ່ງນີ້:

1. ທະບຽນວິສາຫະກິດ ຢ່າງຖືກຕ້ອງຕາມກົດໝາຍ;

2. ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການທ່ອງທ່ຽວ ຢ່າງຖືກຕ້ອງຕາມກົດໝາຍ;

3. ໃບຢັ້ງຢືນການປະຕິບັດ ພັນທະ ພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການອື່ນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. ປະສົບການ ຫຼື ວິຊາສະເພາະ ກ່ຽວກັບການທ່ອງທ່ຽວ ຫຼື ວິທະຍາສາດປ່າໄມ້ ແລະ ສິ່ງແວດລ້ອມ ຫຼື ວິຊາສະເພາະອື່ນກ່ຽວຂ້ອງ.

ຜູ້ປະກອບການທ່ອງທ່ຽວພາຍໃນປະເທດ ທີ່ມີປະສົບການ ແລະ ຜົນງານດີເດັ່ນ ຈະໄດ້ຮັບການພິຈາລະນາເປັນພິເສດ ໃຫ້ດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື.

### ມາດຕາ 13 ເງື່ອນໄຂຊຸມຊົນ

ເງື່ອນໄຂຊຸມຊົນ ທີ່ສາມາດເປັນຄູ່ສັນຍາການທ່ອງທ່ຽວແບບສັນຍາຮ່ວມມື ມີ ດັ່ງນີ້:

1. ເປັນການຈັດຕັ້ງບ້ານ ທີ່ມີບຸກຄະລາກອນ ແລະ ມີການເຄື່ອນໄຫວ ຕາມພາລະບົດບາດ;

2. ມີກົດລະບຽບບ້ານ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ທີ່ສອດຄ່ອງກັບລະບຽບກົດໝາຍ;

3. ເປັນບ້ານ ທີ່ຢູ່ໃນ ຫຼື ຕິດກັບເຂດປ່າໄມ້ ທີ່ຈະດຳເນີນກິດຈະການການທ່ອງທ່ຽວແບບສັນຍາຮ່ວມມື;

4. ມີຫ້ອງການ ຫຼື ສະຖານທີ່ ທີ່ສາມາດເຮັດວຽກ ແລະ ມີລະບອບປະຈຳການແກ້ໄຂວຽກງານຂອງການຈັດຕັ້ງບ້ານ ຢ່າງເປັນປົກກະຕິ.

ໃນກໍລະນີເປັນບ້ານ ທີ່ມີແຜນພັດທະນາຊຸມຊົນ, ບ້ານ ທີ່ໄດ້ສຳເລັດການວາງແຜນຈັດສັນ ຫຼື ບ້ານ ທີ່ມີສັນຍາອະນຸລັກ ຈະໄດ້ຮັບການພິຈາລະນາເປັນພິເສດ.

### ມາດຕາ 14 ຂັ້ນຕອນການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື

ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ການສະເໜີ;
2. ການສຶກສາຄວາມເປັນໄປໄດ້;
3. ການກະກຽມສັນຍາຮ່ວມມື
4. ການອະນຸມັດເຊັນສັນຍາຮ່ວມມື;
5. ການເຊັນສັນຍາຮ່ວມມື;
6. ການຈັດຕັ້ງປະຕິບັດ;
7. ການປະເມີນຜົນການຈັດຕັ້ງປະຕິບັດສັນຍາຮ່ວມມື.

### ມາດຕາ 15 ການສະເໜີ

ຜູ້ປະກອບການ, ຊຸມຊົນ ທີ່ມີຈຸດປະສົງດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ໃນເຂດໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ຍື່ນເຈດຈຳນົງສະເໜີຕໍ່ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກ່ຽວຂ້ອງ ທີ່ຮັບຜິດຊອບເຂດປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງປ່າໄມ້ ທີ່ກຳນົດໃນແບບພິມ 1.

ພາຍຫຼັງໄດ້ຮັບໜັງສືສະເໜີ ແລະ ເອກະສານ ຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ, ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກ່ຽວຂ້ອງ ທີ່ຮັບຜິດຊອບເຂດປ່າໄມ້ ຕ້ອງປະສານສົມທົບກັບພາກສ່ວນກ່ຽວຂ້ອງຮ່ວມກັນດຳເນີນການຄົ້ນຄວ້າ ແລະ ນຳສະເໜີ ກົມປ່າໄມ້ ຫຼື ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຕາມການແບ່ງຂັ້ນຄຸ້ມຄອງ ພິຈາລະນາອະນຸມັດການສຶກສາຄວາມເປັນໄປໄດ້ ພາຍໃນ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີ ແລະ ເອກະສານ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

**ມາດຕາ 16 ການສຶກສາຄວາມເປັນໄດ້**

ຜູ້ປະກອບການ, ຊຸມຊົນ ທີ່ໄດ້ຮັບການອະນຸມັດ ໃຫ້ດຳເນີນການສຶກສາຄວາມເປັນໄປໄດ້ ດຳເນີນການຕາມຂັ້ນຕອນ ດັ່ງນີ້:

1. ສົມທົບກັບ ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ກ່ຽວຂ້ອງຮ່ວມກັນ ຮ່າງບົດບັນທຶກຄວາມເຂົ້າໃຈ ການສຶກສາຄວາມເປັນໄປໄດ້ ທີ່ກຳນົດເງື່ອນໄຂ, ກຳນົດເວລາ ແລະ ເນື້ອໃນອື່ນ ຕາມແບບພິມ 1 ເພື່ອສະເໜີ ກະຊວງກະສິກຳ ແລະ ປ່າໄມ້, ເຈົ້າຄອງນະຄອນຫຼວງວຽງຈັນ ຫຼື ເຈົ້າແຂວງ ຕາມການແບ່ງຂັ້ນຄຸ້ມຄອງ ພິຈາລະນາອະນຸມັດ ແລະ ລົງລາຍເຊັນສັນຍາຮ່ວມມື;

2. ດຳເນີນການ ສຳຫຼວດ ເກັບກຳຂໍ້ມູນ ແລະ ສ້າງເອກະສານຕ່າງໆ ຕາມລຳດັບ ດັ່ງນີ້:

–ສຶກສາຂໍ້ມູນພື້ນຖານທາງດ້ານ ເສດຖະກິດ-ສັງຄົມ, ຄວາມເໝາະສົມທາງທຳມະຊາດ ເຊັ່ນ ອາກາດ, ສະພາບພູມມິປະເທດ, ແຫຼ່ງນ້ຳ, ການນຳໃຊ້ທີ່ດິນ, ແຮງງານທ້ອງຖິ່ນ, ສຳຫຼວດສະພາບປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ປຶກສາຫາລື ເປັນເອກະພາບກັບປະຊາຊົນທ້ອງຖິ່ນ ເພື່ອຮັບກັນຄວາມເປັນເອກະພາບ ແລະ ການເຫັນດີຂອງປະຊາຊົນໃນຊຸມຊົນຈຳນວນຫຼາຍ ໂດຍມີການແຈ້ງຂໍ້ມູນທີ່ຈະປຶກສາຫາລືລ່ວງໜ້າ ແລະ ດຳເນີນການລົງຄະແນນສຽງຢ່າງອິດສະຫຼະ ແລະ ບັນຫາອື່ນທີ່ຈຳເປັນ;

–ສ້າງເອກະສານ ບົດວິພາກເສດຖະກິດ-ເຕັກນິກ ເຊັ່ນ ເງື່ອນໄຂ, ກິດຈະການ, ວິທີການ, ຄວາມຮັບຜິດຊອບຂອງແຕ່ລະຝ່າຍ, ພັນທະທີ່ຕ້ອງປະຕິບັດຮ່ວມກັນ, ຜົນປະໂຫຍດຂອງແຕ່ລະຝ່າຍ, ຜົນກະທົບດ້ານສິ່ງແວດລ້ອມທີ່ຕ້ອງໄດ້ຄຸ້ມຄອງ, ຄຳເຫັນຈາກການຈັດຕັ້ງບ້ານ ທີ່ກ່ຽວຂ້ອງ ແລະ ຂໍ້ມູນອື່ນ ທີ່ກຳນົດໄວ້ໃນແບບພິມ 2 ເພື່ອສະເໜີຜ່ານ ແລະ ຮັບຮອງຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ;

–ສ້າງເອກະສານ ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງມາດຕະການແກ້ໄຂຢ່າງເໝາະສົມ ໂດຍການຢັ້ງຢືນ ແລະ ຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງວາງອອກ;

–ອົງການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ກ່ຽວຂ້ອງແຕ່ລະຂັ້ນ ເປັນຕົ້ນ ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນໃຈກາງປະສານສົມທົບພາກສ່ວນກ່ຽວຂ້ອງຂັ້ນຂອງຕົນ ເຊັ່ນ ຂະແໜງການແຜນການ ແລະ ການລົງທຶນ, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ພາກສ່ວນອື່ນ ເປີດກອງປະຊຸມ ເພື່ອຄົ້ນຄວ້າ ແລະ ພິຈາລະນາອະນຸຍາດດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ພ້ອມທັງ ເຮັດບົດບັນທຶກກອງປະຊຸມ ເພື່ອເປັນບ່ອນອີງລາຍງານຂັ້ນເທິງ ພິຈາລະນາອະນຸມັດ ການກະກຽມສັນຍາຮ່ວມມື.

**ມາດຕາ 17 ການກະກຽມສັນຍາຮ່ວມມື**

ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກ່ຽວຂ້ອງ ທີ່ໄດ້ຮັບມອບໝາຍ ເປັນເຈົ້າການສົມທົບກັບ ຜູ້ປະກອບການ, ຊຸມຊົນ ທີ່ໄດ້ຮັບອະນຸມັດກະກຽມສັນຍາຮ່ວມມື ພ້ອມກັນ ຮ່າງສັນຍາຮ່ວມມືຕາມແບບພິມ 3 ຊຶ່ງເປັນສ່ວນໜຶ່ງຂອງຂໍ້ຕົກລົງສະບັບນີ້ ແລ້ວເປີດກອງປະຊຸມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ຜ່ານ ແລະ ຮັບຮອງຮ່າງສັນຍາ ພ້ອມທັງເຮັດບົດບັນທຶກກອງປະຊຸມ ເພື່ອເປັນບ່ອນອີງໃນການສະເໜີຂັ້ນເທິງ ຂໍອະນຸມັດເຊັນສັນຍາຮ່ວມມື.

**ມາດຕາ 18 ການອະນຸມັດເຊັນສັນຍາຮ່ວມມື**

ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກ່ຽວຂ້ອງ ທີ່ໄດ້ຮັບມອບໝາຍ ເປັນເຈົ້າການກະກຽມຮ່າງໜັງສືສະເໜີ ໂດຍຄັດຕິດເອກະສານທີ່ກ່ຽວຂ້ອງ ຍື່ນຕໍ່ຂັ້ນເທິງທີ່ມີສິດ ເພື່ອພິຈາລະນາ ອອກຂໍ້ຕົກລົງອະນຸມັດເຊັນສັນຍາ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອະນຸມັດການເຊັນສັນຍາຮ່ວມມື ດຳເນີນກິດຈະການການທ່ອງ

ທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ລະດັບຊາດ ຕາມການສະເໜີ ຂອງກົມປ່າໄມ້;

2. ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ ເປັນຜູ້ອະນຸມັດການເຊັນສັນຍາຮ່ວມມື ດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ລະດັບແຂວງ ແລະ ລະດັບເມືອງ ຕາມການສະເໜີ ຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ.

**ມາດຕາ 19 ການເຊັນສັນຍາຮ່ວມມື**

ການເຊັນສັນຍາຮ່ວມມື ແມ່ນການລົງນາມໃສ່ສັນຍາຮ່ວມມື ຫຼັງຈາກໄດ້ຮັບການອະນຸມັດເຊັນສັນຍາຮ່ວມມື ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້.

ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ຮັບມອບສິດ ສົມທົບກັບ ຜູ້ປະກອບການ, ຊຸມຊົນ ທີ່ໄດ້ຮັບອະນຸມັດເຊັນສັນຍາ ຮ່ວມກັນຈັດຕັ້ງພິທີເຊັນສັນຍາ ໂດຍເຊີນຂັ້ນເທິງຖັດຕົນ ເປັນປະທານ, ພາກສ່ວນທີ່ກ່ຽວຂ້ອງແຕ່ລະຂັ້ນ ເຂົ້າຮ່ວມເປັນສັກຂີພະຍານ ພາຍໃນ ສິບ ວັນ ລັດຖະການ ນັບແຕ່ວັນໄດ້ຮັບອະນຸມັດເຊັນສັນຍາຮ່ວມມື ເປັນຕົ້ນໄປ.

**ມາດຕາ 20 ການຈັດຕັ້ງປະຕິບັດສັນຍາຮ່ວມມື**

ສັນຍາຮ່ວມມື ມີຜົນນຳໃຊ້ ແລະ ເລີ່ມຈັດຕັ້ງປະຕິບັດ ຕາມເວລາ ທີ່ກຳນົດໃນສັນຍາຮ່ວມມື ໄປຈົນວັນທີສິ້ນສຸດ ທີ່ກຳນົດໃນສັນຍາຮ່ວມມື, ໃນກໍລະນີ ບໍ່ໄດ້ກຳນົດໄວ້ໃນສັນຍາຮ່ວມມື ກໍໃຫ້ນັບເອົາແຕ່ວັນທີລົງເຊັນສັນຍາຮ່ວມມືເປັນຕົ້ນໄປ ຈົນຄົບຕາມອາຍຸສັນຍາ ທີ່ກຳນົດ.

ການຈັດຕັ້ງປະຕິບັດກິດຈະການຕ່າງໆຂອງແຕ່ລະຝ່າຍ ໃຫ້ອີງໃສ່ເນື້ອໃນ ທີ່ໄດ້ກຳນົດໄວ້ໃນສັນຍາ ໂດຍມີການປຶກສາຫາລືບັນຫາຕ່າງໆ ທີ່ຕິດພັນກັບການປະຕິບັດສັນຍາ ຢ່າງເປັນປົກກະຕິ ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດສູງ. ໃນກໍລະນີ ຝ່າຍໃດໜຶ່ງ ເຫັນວ່າການຈັດຕັ້ງປະຕິບັດສັນຍາ ບໍ່ໄດ້ດຳເນີນໄປຕາມແຜນ ຫຼື ບໍ່ສອດຄ່ອງກັບເນື້ອໃນສັນຍາທີ່ໄດ້ຕົກລົງຮ່ວມກັນ ຫຼື ເກີດມີບັນຫາອື່ນ ທີ່ເປັນອຸປະສັກແກ່ການຈັດຕັ້ງປະຕິບັດສັນຍາ ຕ້ອງປຶກສາຫາລືກັນ ເພື່ອແກ້ໄຂບັນຫາຮ່ວມກັນໃຫ້ທັນກັບສະພາບການ.

**ມາດຕາ 21 ການປະເມີນຜົນການຈັດຕັ້ງປະຕິບັດສັນຍາຮ່ວມມື**

ການປະເມີນຜົນການຈັດຕັ້ງປະຕິບັດສັນຍາຮ່ວມມື ແມ່ນ ການຕີລາຄາ ແລະ ປະເມີນ ປະສິດທິພາບ ແລະ ປະສິດທິຜົນ ຂອງການຈັດຕັ້ງປະຕິບັດກິດຈະກຳໃດໜຶ່ງ ຫຼື ທັງໝົດ ຕາມທີ່ກຳນົດໄວ້ໃນສັນຍາຮ່ວມມື ເພື່ອປັບປຸງແກ້ໄຂບັນຫາ ທີ່ບໍ່ສອດຄ່ອງກັບສະພາບຕົວຈິງ, ບໍ່ສອດຄ່ອງກັບນິຕິກຳຂັ້ນເທິງ, ເປັນຊ່ອງວ່າງ, ມີຜົນກະທົບຕໍ່ການປະຕິບັດສັນຍາຮ່ວມມື ຫຼື ບໍ່ສາມາດຈັດຕັ້ງປະຕິບັດໄດ້.

ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ຂັ້ນເທິງ ເປັນຜູ້ດຳເນີນການປະເມີນຜົນການຈັດຕັ້ງປະຕິບັດສັນຍາຮ່ວມມື ດ້ວຍການສ້າງແຜນການປະເມີນ, ດຳເນີນການປະເມີນ ແລະ ລາຍງານຜົນການປະເມີນ ໃຫ້ຂັ້ນເທິງຂອງຕົນຮັບຊາບເປັນແຕ່ລະໄລຍະ ຢ່າງໜ້ອຍ ໜຶ່ງ ຄັ້ງຕໍ່ປີ ໂດຍການມີສ່ວນຮ່ວມ ແລະ ປຶກສາຫາລື ຂອງຊຸມຊົນທີ່ກ່ຽວຂ້ອງ ລວມທັງແມ່ຍິງ, ຊົນເຜົ່າ ແລະ ເຖົ້າແກ່ແນວໂຮມບ້ານ.

**ມາດຕາ 22 ການໂຈະ ແລະ ການປ່ຽນແປງສັນຍາຮ່ວມມື**

ການໂຈະການປະຕິບັດສັນຍາຮ່ວມມື ແມ່ນ ການຢຸດຊົ່ວຄາວການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ໂດຍຄູ່ສັນຍາເອງ ເນື່ອງຈາກປະສົບບັນຫາ ຫຼື ບໍ່ສາມາດປະຕິບັດເນື້ອໃນຂອງສັນຍາໄດ້ ບົນພື້ນຖານການເຫັນດີຈາກຄູ່ສັນຍາ ຫຼື ອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງ ສັ່ງໂຈະ ເນື່ອງຈາກຄູ່ສັນຍາຝ່າຍໃດໜຶ່ງ ຫຼື ທັງໝົດ ດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ບໍ່ສອດຄ່ອງກັບກິດຈະການທີ່ໄດ້ຮັບອະນຸຍາດ ແລະ ມີການກ່າວເຕືອນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງແລ້ວ.

ການປ່ຽນແປງສັນຍາຮ່ວມມື ແມ່ນ ການເພີ່ມ, ຕັດອອກ ຫຼື ຫຼຸດບາງເນື້ອໃນຂອງສັນຍາຮ່ວມມື ບົນພື້ນຖານການຕົກລົງຮ່ວມກັນຂອງຄູ່ສັນຍາ ໂດຍເຮັດເປັນລາຍລັກອັກສອນ ແລະ ໃຫ້ສະເໜີຕໍ່ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ຂັ້ນເທິງຖັດຕົນ ພິຈາລະນາ.

**ມາດຕາ 23 ການຍົກເລີກ ແລະ ການສິ້ນສຸດສັນຍາ**

ສັນຍາຮ່ວມມື ອາດຖືກຍົກເລີກ ບົນພື້ນຖານການຕົກລົງເຫັນດີຂອງຄູ່ສັນຍາ ດ້ວຍການເຮັດເປັນລາຍລັກອັກສອນ ແລະ ການຮັບຮູ້ຈາກ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຫຼື ກົມປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ, ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຫ້ອງວ່າການຂັ້ນແຂວງທີ່ກ່ຽວຂ້ອງ.

ສັນຍາຮ່ວມມື ມີກຳນົດເວລາສູງສຸດ ຊາວ ປີ ແລະ ສາມາດຕໍ່ໄດ້, ຍົກເວັ້ນສັນຍາຮ່ວມມື ບໍ່ໄດ້ຮັບການປະຕິບັດ ຢ່າງຖືກຕ້ອງ ແລະ ຄົບຖ້ວນ, ຄູ່ສັນຍາ ໄດ້ເຂົ້າຮ່ວມເປັນອັນດຽວກັນ, ສັນຍາບໍ່ສາມາດປະຕິບັດໄດ້, ຄູ່ສັນຍາຝ່າຍໃດໜຶ່ງ ເສຍຊີວິດ ຊຶ່ງບຸກຄົນອື່ນບໍ່ສາມາດສືບຕໍ່ປະຕິບັດໄດ້, ຜູ້ປະກອບການທີ່ເປັນຄູ່ສັນຍາ ໄດ້ຖືກຍຸບເລີກ ຫຼື ລົ້ມລະລາຍ ຫຼື ສັນຍາຮ່ວມມື ຖືກຍົກເລີກໂດຍອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ເນື່ອງຈາກຄູ່ສັນຍາ ລະເມີດລະບຽບກົດໝາຍຮ້າຍແຮງ ຫຼື ບໍ່ມີການປັບປຸງແກ້ໄຂ ຕາມການແຈ້ງເຕືອນຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຫຼື ກົມປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ.

## ໝວດທີ 4
## ການຄຸ້ມຄອງ ແລະ ນຳໃຊ້ລາຍຮັບຈາກການທ່ອງທ່ຽວ ໃນເຂດປ່າໄມ້ແບບສັນຍາຮ່ວມມື

**ມາດຕາ 24 ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບ ທີ່ໄດ້ຈາກການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ຂຶ້ນກັບການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ ມີ ດັ່ງນີ້:

1. ລາຍຮັບ ທີ່ໄດ້ຈາກການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ລະຫວ່າງ ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້, ຜູ້ປະກອບການ ແລະ ຊຸມຊົນ ປະກອບດ້ວຍ:

- ຫ້າ ສ່ວນຮ້ອຍ (5%) ຂອງລາຍຮັບທັງໝົດຂອງຜູ້ປະກອບການ ທີ່ໄດ້ຈາກການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື;
- ຮ້ອຍສ່ວນຮ້ອຍ (100%) ຂອງປີ້ເຂົ້າຊົມ ໂດຍເກັບບໍ່ໃຫ້ຫຼຸດລາຄາຕໍ່າສຸດ ສາມ ໂດລາສະຫະລັດຕໍ່ຄົນ ສຳລັບນັກທ່ອງທ່ຽວຕ່າງປະເທດ ແລະ ຊາວພັນ ກີບ ຕໍ່ຄົນ ສຳລັບນັກທ່ອງທ່ຽວລາວ ຜູ້ທີ່ມີອາຍຸ ສິບຫ້າ ປີ ຫາ ເຈັດສິບ ປີ;
- ດອກເບ້ຍຈາກເງິນຝາກ;
- ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ຖືກຕ້ອງຕາມກົດໝາຍ;

2. ແຫຼ່ງລາຍຮັບ ທີ່ໄດ້ຈາກການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ລະຫວ່າງ ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ແລະ ຊຸມຊົນ ລວມທັງສັນຍາຮ່ວມມືປະເພດອື່ນ ປະກອບດ້ວຍ:

- ຮ້ອຍສ່ວນຮ້ອຍ (100%) ຂອງປີ້ເຂົ້າຊົມ ໂດຍເກັບບໍ່ໃຫ້ຫຼຸດລາຄາຕໍ່າສຸດ ສາມ ໂດລາສະຫະ ລັດຕໍ່ຄົນ ສຳລັບນັກທ່ອງທ່ຽວຕ່າງປະເທດ ແລະ ຊາວ ພັນກີບຕໍ່ຄົນ ສຳລັບນັກທ່ອງທ່ຽວລາວ ຜູ້ທີ່ມີອາຍຸ ສິບສາມ ປີ ຫາ ເຈັດສິບ ປີ;
- ດອກເບ້ຍຈາກເງິນຝາກ;
- ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 25 ການຄຸ້ມຄອງລາຍຮັບ**

ການຄຸ້ມຄອງລາຍຮັບ ທີ່ໄດ້ຈາກການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ແມ່ນ ການບໍລິຫານຈັດການລາຍຮັບທັງໝົດ ທີ່ໄດ້ຈາກການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ໃຫ້ສອດຄ່ອງກັບເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ ໂດຍແມ່ນອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່

ດິນປ່າໄມ້ ເປັນຜູ້ຄຸ້ມຄອງ ແລະ ແບ່ງປັນລາຍຮັບໃນສັດສ່ວນຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງຂໍ້ຕົກລົງສະບັບນີ້ ເພື່ອຮອງຮັບຄ່າໃຊ້ຈ່າຍໃນການຄຸ້ມຄອງເຂດພື້ນທີ່ໃນອະນາຄົດ ແລະ ສາມາດກຸ້ມຕົນເອງດ້ານງົບປະມານ ກໍຄືການບໍລິຫານຈັດການການທ່ອງທ່ຽວແບບຍືນຍົງໃນອະນາຄົດ ບົນພື້ນຖານຫຼັກການການເງິນຍືນຍົງ, ຮັບປະກັນຄວາມໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 26 ການນຳໃຊ້ລາຍຮັບ**

ລາຍຮັບ ທີ່ໄດ້ຈາກການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງຂໍ້ຕົກລົງສະບັບນີ້ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການຄຸ້ມຄອງ, ປົກປັກຮັກສາ ແລະພັດທະນາ ພື້ນທີ່ດັ່ງກ່າວ ໃຫ້ມີຄວາມອຸດົມສົມບູນ ຕາມທິດທ່ອງທ່ຽວແບບຍືນຍົງ;

2. ຈັດຕັ້ງປະຕິບັດກິດຈະກຳຕ່າງໆ ທີ່ຕິດພັນກັບຄວາມຮັບຜິດຊອບຂອງອົງການຄຸ້ມຄອງວຽກງານປ່າ ໄມ້ ແລະ ທີ່ດິນປ່າໄມ້ ທີ່ກຳນົດໄວ້ໃນສັນຍາຮ່ວມມື;

3. ສ້າງ ແລະ ປັບປຸງ ກົດລະບຽບ, ຄູ່ມື ແລະ ເອກະສານຕ່າງໆ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື;

4. ໂຄສະນາເຜີຍແຜ່ ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ລະບຽບການ ກ່ຽວກັບການອະນຸລັກ ແລະ ການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື;

5. ຝຶກອົບຮົມວິຊາການຕ່າງໆ ໃຫ້ແກ່ຜູ້ປະກອບການ, ຊຸມຊົນ ແລະ ປະຊາຊົນທົ່ວໄປ ເພື່ອໃຫ້ຮູ້ທີ່ຕັ້ງ, ບົດບາດ, ຄວາມສຳຄັນ ແລະ ຄຸນຄ່າຂອງຊີວະນາໆພັນ, ການອະນຸລັກ ແລະ ການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື;

6. ປະກອບສ່ວນເຂົ້າໃນການພັດທະນາເມືອງ, ບ້ານຢູ່ໃນ ຫຼື ຕິດກັບເຂດປ່າໄມ້ທີ່ດຳເນີນກິດຈະການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື;

7. ປະຕິບັດນະໂຍບາຍຕໍ່ຜູ້ມີຄຸນງາມຄວາມດີ ຫຼື ມີຜົນງານດີເດັ່ນໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ໃນເຂດພື້ນທີ່ດັ່ງກ່າວ.

**ມາດຕາ 27 ການແບ່ງປັນລາຍຮັບ**

ລາຍຮັບທັງໝົດ ທີ່ໄດ້ຈາກການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງຂໍ້ຕົກລົງສະບັບນີ້ ໃຫ້ຄິດໄລ່ເປັນຮ້ອຍສ່ວນຮ້ອຍ (100%) ແລ້ວມາແບ່ງເປັນ ສາມ ສ່ວນ ດັ່ງນີ້:

1. ສ່ວນທີໜຶ່ງ ຫົກສິບສ່ວນຮ້ອຍ (60%) ຂອງລາຍຮັບທັງໝົດ ມອບໃຫ້ ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້. ສ່ວນແບ່ງທີໜຶ່ງນີ້ ໃຫ້ຄິດໄລ່ເປັນຮ້ອຍສ່ວນຮ້ອຍ (100%) ແລ້ວແບ່ງອອກເປັນສອງ ພູດ ຄື: ແປດສິບສ່ວນຮ້ອຍ (80%) ຂອງສ່ວນທີໜຶ່ງ ມອບໃຫ້ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ເປັນຄູ່ສັນຍາຮ່ວມມື ເພື່ອນຳໃຊ້ເຂົ້າໃນການປົກປັກຮັກສາປ່າໄມ້ ແລະ ຊາວ ສ່ວນຮ້ອຍ (20%) ຂອງສ່ວນທີໜຶ່ງ ມອບເຂົ້າກອງທຶນປົກປັກຮັກສາປ່າໄມ້;

2. ສ່ວນທີສອງ ສິບ ສ່ວນຮ້ອຍ (10%) ຂອງລາຍຮັບທັງໝົດ ມອບໃຫ້ພະແນກການຂັ້ນແຂວງ ແລະ ຫ້ອງການຂັ້ນເມືອງ ທີ່ກ່ຽວຂ້ອງ ເພື່ອນຳໃຊ້ເຂົ້າໃນ ກວດກາ, ຕິດຕາມ ວຽກງານປ່າໄມ້, ໂຄສະນາເຜີຍແຜ່, ຊຸກຍູ້;

3. ສ່ວນທີສາມ ສາມສິບ ສ່ວນຮ້ອຍ (30%) ຂອງລາຍຮັບທັງໝົດ ມອບໃຫ້ເປັນທຶນພັດທະນາບ້ານທີ່ຢູ່ໃນ ຫຼື ຕິດກັບເຂດປ່າໄມ້ ທີ່ດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ເພື່ອນຳໃຊ້ເຂົ້າໃນການ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້.

# ໝວດທີ 5
# ຂໍ້ຫ້າມ

**ມາດຕາ 28 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ທຳລາຍຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມທີ່ພົວພັນເຖິງການທ່ອງທ່ຽວໃນເຂດປ່າໄມ້;

2. ສ້າງສິ່ງກີດຂວາງ, ສິ່ງສຽງລົບກວນ, ຈັດງານ, ຈັດກິດຈະການຕ່າງໆຢູ່ສະຖານທີ່ທ່ອງທ່ຽວໃນເຂດປ່າໄມ້ ໂດຍບໍ່ໄດ້ຮັບອະນຸຍາດ;

3. ນຳເອົາ ພືດ, ສັດ ຫຼື ສິ້ນສ່ວນ ອອກຈາກເຂດປ່າໄມ້ໂດຍບໍ່ໄດ້ຮັບອະນຸຍາດ;

4. ຖິ້ມສິ່ງເສດເຫຼືອຊະຊາຍ, ກໍ່ກອງໄຟ ແລະ ຖິ້ມກົ້ນກອກຢາ ຫຼື ເຮັດກິດຈະກຳອື່ນ ທີ່ເປັນສາເຫດຂອງການເກີດອັກຄີໄພ ຫຼື ໄຟໄໝ້ລາມປ່າ;

5. ບຸກລຸກ, ຈັບຈອງ ຫຼື ປຸກສ້າງສິ່ງຕ່າງໆໃນເຂດປ່າໄມ້ ໂດຍບໍ່ໄດ້ຮັບອະນຸຍາດ;

6. ໃຫ້ຂໍ້ມູນ, ໂຄສະນາບິດເບືອນ ແລະ ໃສ່ຮ້າຍປ້າຍສີ ເພື່ອສ້າງຄວາມເສຍຫາຍແກ່ຜູ້ປະກອບການ, ຊຸມຊົນ ຫຼື ເຈົ້າໜ້າທີ່;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 29 ຂໍ້ຫ້າມສຳລັບນັກທ່ອງທ່ຽວ**

ຫ້າມ ນັກທ່ອງທ່ຽວ ທີ່ນຳໃຊ້ການບໍລິການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ມີພຶດຕິກຳ ດັ່ງນີ້:

1. ລະເມີດກົດລະບຽບ ຂອງສະຖານທີ່ທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື;

2. ເຂົ້າໄປສະຖານທີ່ເກືອດຫ້າມ ເປັນຕົ້ນ ເຂດຍຸດທະສາດ, ເຂດປົກປັກຮັກສາປ່າທີ່ເຂັ້ມງວດ, ເຂດສ່ວນຕົວ, ປ່າສັກສິດ, ປ່າຊ້າ ໂດຍບໍ່ໄດ້ຮັບອະນຸຍາດ;

3. ສວຍໃຊ້ສັນຍາຮ່ວມມື ເພື່ອຄ້າມະນຸດ, ໂສເພນີ, ຂູດຮີດທາງເພດ, ມົ້ວສຸມທາງເພດ, ລ່ວງລະເມີດທາງເພດ, ຂູດຮີດແຮງງານ, ໃຊ້ແຮງງານເດັກ, ຫຼິ້ນການພະນັນ, ຄ້າຂາຍ, ເສບ ຫຼື ຈຳໜ່າຍຢາເສບຕິດ;

4. ໃຊ້ສຽງດັງເກີນຂອບເຂດ ຊຶ່ງເປັນການລົບກວນສັດປ່າ ແລະ ມີມົນລະພິດທາງສຽງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 30 ຂໍ້ຫ້າມສຳລັບຜູ້ປະກອບການ**

ຫ້າມ ຜູ້ປະກອບການ ມີພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະການບໍລິການການທ່ອງທ່ຽວໃນເຂດປ່າໄມ້ ໂດຍບໍ່ໄດ້ຮັບອະນຸຍາດ;

2. ດຳເນີນກິດຈະການບໍລິການການທ່ອງທ່ຽວ ທີ່ບໍ່ສອດຄ່ອງກັບແຜນພັດທະນາການທ່ອງທ່ຽວ ຫຼື ແຜນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ກໍ່ຄວາມເສຍຫາຍແກ່ ແຫຼ່ງທ່ອງທ່ຽວ, ສະຖານທີ່ທ່ອງທ່ຽວ, ສິ່ງແວດລ້ອມ ຫຼື ທັດສະນີຍະພາບ;

3. ໃຫ້ບໍລິການ ຫຼື ນຳພານັກທ່ອງທ່ຽວໄປທ່ຽວໃນສະຖານທີ່ ທີ່ເກືອດຫ້າມ;

4. ປະຕິບັດວຽກງານບໍລິການການທ່ອງທ່ຽວ ທີ່ຂັດກັບກົດລະບຽບ, ລະບຽບການ ແລະ ກົດໝາຍດ້ານສຸຂະພາບ ແລະ ຄວາມປອດໄພ.

5. ສະແຫວງຫາຜົນປະໂຫຍດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຈາກນັກທ່ອງທ່ຽວ;

6. ໂອນ ຫຼື ໃຫ້ຜູ້ອື່ນປະຕິບັດສັນຍາຮ່ວມມືແທນ ໂດຍບໍ່ໄດ້ຮັບການເຫັນດີຈາກຄູ່ສັນຍາ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 31 ຂໍ້ຫ້າມສໍາລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕໍາແໜ່ງ ແລະ ຄວາມຮັບຜິດຊອບ ເພື່ອນາບຂູ່ ຫຼື ຮຽກເອົາຜົນປະໂຫຍດ ຈາກຜູ້ປະກອບການ, ຊຸມຊົນ, ນັກທ່ອງທ່ຽວ ແລະ ບຸກຄົນອື່ນ;

2. ສົມຮູ້ຮ່ວມຄິດກັບ ຜູ້ປະກອບການ ຫຼື ຊຸມຊົນ ເພື່ອຫາຜົນປະໂຫຍດແກ່ຕົນເອງ, ຍາດຕິພີ່ນ້ອງ ຫຼື ພັກພວກ ຂອງຕົນ;

3. ກົດໜ່ວງ, ຖ່ວງດຶງ, ແກ່ຍາວເວລາ, ເມີນເສີຍ ຫຼື ປະລະຕໍ່ໜ້າທີ່ ທີ່ການຈັດຕັ້ງມອບໝາຍໃຫ້;

4. ເປີດເຜີຍຄວາມລັບທາງລັດຖະການ, ປອມແປງເອກະສານ ຫຼື ນໍາໃຊ້ເອກະສານປອມ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຄຸ້ມຄອງ ແລະ ການກວດກາວຽກງານ ທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື

**ມາດຕາ 32 ການຄຸ້ມຄອງວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື**

ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ຢ່າງລວມສູນ ໂດຍມອບໃຫ້ ກົມປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ.

ການຈັດຕັ້ງ ທີ່ຮັບຜິດຊອບວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ແມ່ນອົງການດຽວ ກັນກັບອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງປະກອບດ້ວຍ:

1. ຂັ້ນສູນກາງ ແມ່ນ ກົມປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້;

2. ຂັ້ນແຂວງ ແມ່ນ ພະແນກກະສິກໍາ ແລະ ປ່າໄມ້;

3. ຂັ້ນເມືອງ ແມ່ນ ຫ້ອງການກະສິກໍາ ແລະ ປ່າໄມ້;

4. ກອງຄຸ້ມຄອງປ່າສະຫງວນ-ປ່າປ້ອງກັນຂັ້ນແຂວງ, ກອງຄຸ້ມຄອງອຸທິຍານແຫ່ງຊາດ ແລະ ກອງຄຸ້ມ ຄອງປ່າສະຫງວນແຫ່ງຊາດ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງກົມປ່າໄມ້**

ໃນການຄຸ້ມຄອງວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ກົມປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານທ່ອງທ່ຽວໃນປ່າ ໄມ້ໃນຂອບເຂດທົ່ວປະເທດ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ເປັນແຜນການ, ແຜນງານໂຄງການ ກ່ຽວ ກັບການທ່ອງທ່ຽວທໍາມະຊາດ ພ້ອມທັງດໍາເນີນການໂຄສະນາ ເຜີຍແຜ່ ແລ້ວຈັດຕັ້ງປະຕິບັດ;

3. ສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກໍານົດແຜນປົກປັກຮັກສາ, ອະນຸລັກ, ບູລະນະ, ພັດທະນາ ແລະ ໂຄສະນາສົ່ງເສີມແຫຼ່ງທ່ອງທ່ຽວຂອງເຂດປ່າໄມ້ໃນຂອບເຂດທົ່ວປະເທດ;

4. ກໍານົດ ແລະ ສ້າງແມ່ແບບ, ແບບພິມຄໍາຮ້ອງ ແລະ ເອກະສານກ່ຽວຂ້ອງຕ່າງໆ ເພື່ອສະໜອງໃຫ້ ແກ່ຜູ້ສະເໜີຂໍອະນຸມັດສັນຍາຮ່ວມມືທ່ອງທ່ຽວໃນເຂດປ່າໄມ້.

5. ປະສານສົມທົບ ແລະ ສະໜອງຂໍ້ມູນໃນການນໍາສະເໜີຂຶ້ນທະບຽນ, ຈັດລະດັບສະຖານທີ່ທ່ອງ ທ່ຽວ ຕາມມາດຕະຖານ ແລະ ເງື່ອນໄຂ ກ່ຽວກັບການຈັດລະດັບທົ່ວປະເພດ ຕາມທີ່ຂະແໜງການຖະແຫຼງ ຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ວາງອອກ;

6. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມການຈັດຕັ້ງການເຄື່ອນໄຫວ ແລະ ການປະຕິບັດນະໂຍບາຍ, ແຜນການ, ໂຄງການ, ລະບຽບກົດໝາຍ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;

7. ຄຸ້ມຄອງ ແລະ ນຳໃຊ້ທຶນພັດທະນາປ່າໄມ້ ຢ່າງມີແຜນການ, ມີປະສິດທິຜົນ, ສອດຄ່ອງກັບເປົ້າໝາຍ ແລະ ຈຸດປະສົງຂອງກອງທຶນດັ່ງກ່າວ, ຫຼັກການ ແລະ ລະບຽບການ ທີ່ກ່ຽວຂ້ອງ;

8. ປະສານສົມທົບກັບ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອສຳຫຼວດ, ການເກັບກຳຂໍ້ມູນ, ການຄົ້ນຄວ້າ ແລະ ວາງແຜນພັດທະນາແຫຼ່ງທ່ອງທ່ຽວ;

9. ພິຈາລະນາ ອະນຸຍາດການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ທີ່ມີພື້ນທີ່ກວມເອົາຫຼາຍກວ່າໜຶ່ງແຂວງຂຶ້ນໄປ ພ້ອມທັງສັ່ງໂຈະ ຫຼື ຍົກເລີກກິດຈະການດັ່ງກ່າວ ໂດຍປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ;

10.ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທ່ອງທ່ຽວໃນເຂດປ່າໄມ້;

11.ຮັບ ແລະ ແກ້ໄຂຄຳສະເໜີ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້;

12.ສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວໃນເຂດປ່າໄມ້ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນປົກກະຕິ;

13.ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 34 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ

ໃນການຄຸ້ມຄອງວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງແຜນການ, ໂຄງການກ່ຽວກັບການພັດທະນາການທ່ອງທ່ຽວ ໃນປ່າເຂດປ່າໄມ້ ເພື່ອນສະເໜີຂັ້ນເທິງ ພິຈາລະນາ;

2. ປະຕິບັດ ກົດໝາຍ, ລະບຽບ, ຄຳສັ່ງ ແລະ ແຜນການ ກ່ຽວກັບວຽກງານທ່ອງທ່ຽວໃນເຂດປ່າໄມ້;

3. ເປັນເຈົ້າການປະສານງານກັບພາກສ່ວນ ທີ່ກ່ຽວຂ້ອງ ສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນບັນຊີ ພ້ອມທັງວາງແຜນປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ໃນເຂດປ່າໄມ້;

4. ຄົ້ນຄວ້າ ພິຈາລະນາອະນຸຍາດການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ທີ່ມີພື້ນທີ່ສະເພາະ ນະຄອນຫຼວງວຽງຈັນ ຫຼື ແຂວງໃດໜຶ່ງ ພ້ອມທັງສັ່ງໂຈະ ຫຼື ຍົກເລີກການດຳເນີນກິດຈະການດັ່ງກ່າວ ໂດຍປະສານສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງ;

5. ຮັບ ແລະ ແກ້ໄຂຄຳສະເໜີ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້;

6. ບຳລຸງ, ສ້າງ, ຈັດຕັ້ງຝຶກອົບຮົມບຸກຄະລາກອນ ກ່ຽວກັບວຽກງານທ່ອງທ່ຽວໃນເຂດປ່າໄມ້;

7. ພົວພັນກັບຕ່າງປະເທດ ກ່ຽວກັບວຽກງານທ່ອງທ່ຽວໃນເຂດປ່າໄມ້ ຕາມການມອບໝາຍຂອງຂັ້ນເທິງ;

8. ສະຫຼຸບ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວໃນເຂດປ່າໄມ້ ໃຫ້ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 35 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ

ໃນການຄຸ້ມຄອງວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງແຜນການ, ໂຄງການ ກ່ຽວກັບການພັດທະນາການທ່ອງທ່ຽວໃນເຂດປ່າໄມ້ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາເຜີຍແຜ່ ແນວທາງ ນະໂຍບາຍບາຍ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້;

3. ປະຕິບັດ ແຜນການ, ລະບຽບກົດໝາຍ ແລະ ຄຳສັ່ງ ກ່ຽວກັບວຽກງານທ່ອງທ່ຽວໃນເຂດປ່າໄມ້;

4. ເປັນເຈົ້າການປະສານງານກັບພາກສ່ວນ ທີ່ກ່ຽວຂ້ອງ ສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນບັນຊີ ພ້ອມທັງວາງແຜນປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ໃນເຂດປ່າໄມ້;

5. ຄົ້ນຄ້ວາປະກອບຄຳເຫັນຕໍ່ການຂໍອະນຸຍາດດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື, ການໂຈະ ແລະ ການຍົກເລີກການດຳເນີນກິດຈະການດັ່ງກ່າວ;

6. ຮັບ ແລະ ແກ້ໄຂຄຳສະເໜີ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້;

7. ສະເໜີ ບຳລຸງ, ສ້າງ, ຈັດຕັ້ງຝຶກອົບຮົມບຸກຄະລາກອນ ທີ່ຮັບຜິດຊອບວຽກງານທ່ອງທ່ຽວໃນເຂດປ່າໄມ້;

8. ສະຫຼຸບ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານທ່ອງທ່ຽວໃນເຂດປ່າໄມ້ ໃຫ້ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 36 ສິດ ແລະ ໜ້າທີ່ ຂອງກອງຄຸ້ມຄອງປ່າສະຫງວນ-ປ່າປ້ອງກັນຂັ້ນແຂວງ, ກອງຄຸ້ມຄອງອຸທິຍານແຫ່ງຊາດ ແລະ ກອງຄຸ້ມຄອງປ່າສະຫງວນແຫ່ງຊາດ

ໃນການຄຸ້ມຄອງວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ກອງຄຸ້ມຄອງປ່າສະຫງວນ-ປ່າປ້ອງກັນຂັ້ນແຂວງ, ກອງຄຸ້ມຄອງອຸທິຍານແຫ່ງຊາດ ແລະ ກອງຄຸ້ມຄອງປ່າສະຫງວນແຫ່ງຊາດ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ຜັນຂະຫຍາຍ ແນວທາງ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ມາເປັນລະບຽບການພາຍໃນຕົນ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

2. ໂຄສະນາ ເຜີຍແຜ່ ແນວທາງ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້ ໃຫ້ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ;

3. ສົມທົບກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດສັນຍາຮ່ວມມື ໃຫ້ໄດ້ຮັບຜົນດີ;

4. ເປັນໃຈກາງໃນການເກັບລາຍຮັບ ແລະ ນຳໃຊ້ເຂົ້າໃນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມສັນຍາຮ່ວມມື ກຳນົດ;

5. ຄົ້ນຄວ້າປະກອບຄຳເຫັນຕໍ່ການສະເໜີສ້າງສັນຍາຮ່ວມມືການທ່ອງທ່ຽວໃນເຂດປ່າໄມ້;

6. ຕາງໜ້າອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ລົງລາຍເຊັນສັນຍາຮ່ວມມື ພາຍຫຼັງໄດ້ຮັບອະນຸມັດຈາກ ກະຊວງກະສິກຳ ແລະ ປ່າໄມ້, ເຈົ້າຄອງນະຄອນຫຼວງວຽງຈັນ ຫຼື ເຈົ້າແຂວງ ຕາມການແບ່ງຂັ້ນຄຸ້ມຄອງ;

7. ຮັບ ແລະ ແກ້ໄຂຄຳສະເໜີ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້;

8. ສະຫຼຸບ ລາຍງານການຈັດຕັ້ງປະຕິບັດ ວຽກງານທ່ອງທ່ຽວໃນເຂດປ່າໄມ້ ໃຫ້ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ທີ່ຕົນຂຶ້ນກັບ ແລະ ກົມປ່າໄມ້ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 37 ສິດ ແລະ ໜ້າທີ່ ຂອງການຈັດຕັ້ງບ້ານ

ໃນການຄຸ້ມຄອງວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ການຈັດຕັ້ງບ້ານ ທີ່ເປັນຄູ່ສັນຍາຮ່ວມມື ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໃຫ້ຄວາມຮ່ວມມື, ຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກແກ່ການຈັດຕັ້ງປະຕິບັດສັນຍາຮ່ວມມື;

2. ຊຸກຍູ້, ຕິດຕາມ ແລະ ກວດກາວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື;

3. ເຂົ້າຮ່ວມກອງປະຊຸມ, ປະກອບຄຳເຫັນຕໍ່ແຜນພັດທະນາສະຖານທີ່ທ່ອງທ່ຽວ ແລະ ແຜນພັດທະນາບ້ານ;

4. ຮັບຄຳສະເໜີ ແລະ ໄກ່ເກ່ຍຂໍ້ຂັດແຍ່ງ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 38 ເນື້ອໃນກວດກາ**

ເນື້ອໃນການກວດກາການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ມີ ດັ່ງນີ້:

1. ການປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ລະບຽບການ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື;

2. ການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ ຕາມການອະນຸຍາດ;

3. ການພິຈາລະນາອະນຸຍາດ, ໂຈະ ແລະ ຍົກເລີກການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື;

4. ການແກ້ໄຂຄຳສະເໜີ ຂອງຜູ້ປະກອບການ, ຊຸມຊົນ ຫຼື ປະຊາຊົນ ກ່ຽວກັບການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື;

5. ການປະຕິບັດນະໂຍບາຍຍ້ອງຍໍຕໍ່ຜູ້ມີຜົນງານດີເດັ່ນ ແລະ ນຳໃຊ້ມາດຕະການຕ່າງໆຕໍ່ຜູ້ລະເມີດລະບຽບກົດໝາຍ;

6. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 39 ຮູບການການກວດກາ**

ຮູບການການກວດກາການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ປະກອບດ້ວຍ:

1. ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການທີ່ມີລັກສະນະກວດກາຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ໂດຍປະຕິບັດຢ່າງໜ້ອຍ ໜຶ່ງ ຄັ້ງຕໍ່ປີ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາ ເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າຢ່າງໜ້ອຍ ໜຶ່ງ ວັນ;

3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

**ມາດຕາ 40 ການແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງ ທີ່ເກີດຈາກການດຳເນີນກິດຈະການການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ໃຫ້ຄູ່ສັນຍາ ແກ້ໄຂດ້ວຍ ການປະນີປະນອມ ຫຼື ການໄກ່ເກ່ຍ ໂດຍການຈັດຕັ້ງບ້ານ ດ້ວຍການມີສ່ວນຮ່ວມຂອງຄະນະກຳມະການໄກ່ເກ່ຍບ້ານ ແລະ ຫ້ອງການຍຸຕິທຳຂັ້ນເມືອງ. ໃນກໍລະນີ ບໍ່ສາມາດຕົກລົງກັນໄດ້ ໃຫ້ດຳເນີນການແກ້ໄຂທາງດ້ານບໍລິຫານ ໂດຍອີງການລັດ ທີ່ກ່ຽວຂ້ອງ ຫຼື ແກ້ໄຂ ໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ການຕັດສິນຂອງສານປະຊາຊົນ ຕາມກົດໝາຍ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 41 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການຊຸກຍູ້, ສົ່ງເສີມ, ຄຸ້ມຄອງ, ຕິດຕາມ ກວດກາວຽກງານທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 42 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາ ຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 43 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ.

**ມາດຕາ 44 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 18 ກໍລະກົດ 2025 ເປັນຕົ້ນໄປ.

**ລັດຖະມົນຕີ**

ປອ. ລິນຄຳ ດວງສະຫວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແບບພິມ 1

# ແບບພິມໜັງສືສະເໜີ
# ດຳເນີນກິດຈະການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື

1. ໜ້າປົກ
2. ຂໍ້ມູນບໍລິສັດ
3. ໜັງສືສະເໜີ
4. ຂໍ້ສະເໜີດ້ານວິຊາການ
5. ຂໍ້ສະເໜີທາງການເງິນ
6. ສຳເນົາເອກະສານທະບຽນວິສາຫະກິດ
7. ສຳເນົາໃບອະນຸຍາດດຳເນີນທຸລະກິດ
8. ສຳເນົາໃບຢັ້ງຢືນການຊຳລະພາສີ, ອາກອນ
9. ໃບຢັ້ງຢືນສະຖານະການເງິນ

**ແບບພິມ 1**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

# ໜັງສືສະເໜີ

**ຮຽນ:** ທ່ານຫົວໜ້າ ກອງອຸທິຍານແຫ່ງຊາດ/ກອງຄຸ້ມຄອງປ່າສະຫງວນປ່າປ້ອງກັນ-............ ທີ່ນັບຖື.

**ເລື່ອງ:** ສະເໜີຂໍດຳເນີນກິດຈະການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື.

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍປ່າສະຫງວນ ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການທ່ອງທ່ຽວໃນເຂດປ່າໄມ້ ສະບັບເລກທີ 1926/ກປ, ລົງວັນທີ 03 ມິຖຸນາ 2025;
- ອີງຕາມ ຂໍ້ຕົກລົງ ຂອງກົມປ່າໄມ້/ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ...... ວ່າດ້ວຍການອະນຸຍາດ ດຳເນີນກິດຈະການທ່ອງທ່ຽວໃນເຂດປ່າໄມ້ແບບສັນຍາຮ່ວມມື ລະຫວ່າງ.......... ສະບັບເລກທີ ........./........, ລົງວັນທີ ...................

ບໍລິສັດ......................................... ຂໍຖືເປັນກຽດຮຽນສະເໜີມາຍັງ ທ່ານຫົວໜ້າອຸທິຍານແຫ່ງຊາດ/ກອງຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນ............ຊາບວ່າ: ເພື່ອສົ່ງເສີມ ແລະ ພັດທະນາການທ່ອງທ່ຽວທີ່ຕິດພັນກັບການປົກປັກຮັກສາ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້, ພັດທະນາ ໃຫ້ມີຄວາມຍືນຍົງ, ສ້າງວຽກເຮັດງານທຳ, ເພີ່ມລາຍໄດ້ໃຫ້ແກ່ຊຸມຊົນ ທີ່ອາໄສຢູ່ໃນ ແລະ ຕິດກັບເຂດປ່າໄມ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ທ້ອງຖິ່ນ- ແຂວງ/ເມືອງ................ ໃຫ້ເຂັ້ມແຂງນັ້ນ, ບໍລິສັດ ............................ມີຈຸດປະສົງເປັນຄູ່ຮ່ວມງານກັບອຸທິຍານແຫ່ງຊາດ/ກອງຄຸ້ມຄອງ................ ............. ແລະ ອົງການປົກຄອງບ້ານ.......... ເມືອງ.......... ແຂວງ............ ດ້ວຍການດຳເນີນກິດຈະການທ່ອງທ່ຽວໃນເຂດປ່າໄມ້ ພາຍໃນສັນຍາຮ່ວມມືການທ່ອງທ່ຽວໃນເຂດ..........................

ດັ່ງນັ້ນ, ຈິ່ງສະເໜີມາຍັງທ່ານ ເພື່ອພິຈາລະນາ ຕາມເຫັນສົມຄວນດ້ວຍ.

ນະຄອນຫຼວງວຽງຈັນ/ແຂວງ......., ວັນທີ.......................

**ບໍລິສັດ...........**

(ເຊັນ ແລະ ປະທັບຕາ)

ຊື່ ແລະ ນາມສະກຸນ

ໂທລະສັບ:...............................

# ແບບຟອມສະເໜີຂໍ້ມູນບໍລິສັດ/ຄວາມອາດສາມາດ 20% (20 ຄະແນນ)

## ຂໍ້ມູນບໍລິສັດ (10 ຄະແນນ)

| | |
|---|---|
| **1.** ບໍລິສັດ | ຊື່ບໍລິສັດ:<br>ເຈົ້າຂອງບໍລິສັດ:<br>ໂທລະສັບ: ອີເມວ: |
| **2.** ການລົງທະບຽນບໍລິສັດ | ໝາຍເລກໃບທະບຽນ:<br>ວັນທີອອກ<br>ແຂວງອອກໃຫ້ |
| **3.** ໃບອະນຸຍາດດຳເນີນການທ່ອງທ່ຽວ | ໝາຍເລກໃບອະນຸຍາດ:<br>ປະເພດ:<br>ວັນທີອອກ.................__________. ແຂວງອອກໃຫ້<br>...........................______________ |
| **4.** ສະຖານະພາບພາສີ | |
| **5.** ປີຂອງການດຳເນີນງານ | |
| **6.** ສະຖານທີ່ຫ້ອງການບໍລິສັດ | |
| **7.** ເວັບໄຊທ໌Facebook / | |
| **8.** ປະເພດການທ່ອງທ່ຽວ /ບໍລິການ (ເນັ້ນການທ່ອງທ່ຽວແບບອະນຸລັກ) | |
| **9.** ຕະຫຼາດຫຼັກ | |
| **10.** ພະນັກງານ | ເຕັມເວລາ: **ຜູ້ຊາຍ**......... ແມ່ຍິງ ............. ຊົນເຜົ່າ ...........<br>ສ່ວນເວລາ: **ຜູ້ຊາຍ**......... ແມ່ຍິງ ............. ຊົນເຜົ່າ ............<br>ລາຍລະອຽດອື່ນໆ: |
| **11.** ຈຳນວນນັກທ່ອງທ່ຽວທັງໝົດ/ນັກທ່ອງທ່ຽວທັງໝົດປະຈຳປີ | ການຄາດຄະເນ:<br>ລາຍລະອຽດ: |
| **12.** ລາຍຮັບປະຈຳປີ | ການຄາດຄະເນ:<br>ລາຍລະອຽດ: |
| **13.** ຄູ່ຮ່ວມການຕະຫຼາດ (ສຸມໃສ່ການທ່ອງທ່ຽວແບບອະນຸລັກ) | |
| **14.** ຂະໜາດກຸ່ມສະເລ່ຍ ຄວາມຍາວສະເລ່ຍ/ຈຳນວນຂອງມື້ ຂອງລາຍການທ່ອງທ່ຽວ | |

| | |
|---|---|
| **15.** ເສັ້ນທາງປະຈຸບັນ ໂດຍເນັ້ນໃສ່ການທ່ອງທ່ຽວແບບອະນຸລັກ (ກະລຸນາອ້າງອີງຕົວຢ່າງໂຄສະນາຂອງບໍລິສັດ) | |

## ປະສົບການດ້ານການທ່ອງທ່ຽວແບບອະນຸລັກ (10 ຄະແນນ)

| |
|---|
| 16. ມີປະສົບການໃນການຄຸ້ມຄອງສະຖານທີ່ທ່ອງທ່ຽວແບບທຳມະຊາດບໍ ? ອະທິບາຍ (**4** ຄະແນນ)<br>……………………………………………………………………………………………<br>……………………………………………………………………………………………<br>……………………………………………………………………………………………<br>……………………………………………………………………………………………<br>……………………………………………………………………………………………<br>…………………………………………………………………………………………… |
| **17.** ມີປະສົບການເຮັດວຽກຢູ່ໃນປ່າສະຫງວນ ແລະ/ຫຼື ກ່ຽວກັການອະນຸລັກບໍ ? ອະທິບາຍ (**3** ຄະແນນ)<br>……………………………………………………………………………………………<br>……………………………………………………………………………………………<br>……………………………………………………………………………………………<br>……………………………………………………………………………………………<br>……………………………………………………………………………………………<br>…………………………………………………………………………………………… |
| **18.** ມີປະສົບການຮ່ວມມືກັບຊຸມຊົນບໍ່ ? ອະທິບາຍ (**3** ຄະແນນ)<br>……………………………………………………………………………………………<br>……………………………………………………………………………………………<br>……………………………………………………………………………………………<br>……………………………………………………………………………………………<br>……………………………………………………………………………………………<br>…………………………………………………………………………………………… |

## ຂໍ້ສະເໜີດ້ານວິຊາການ

*(ກະລຸນາຕອບຄຳຖາມຂ້າງລຸ່ມນີ້ ເພື່ອເຮັດບົດສະເໜີດ້ານວິຊາການຂອງທ່ານ,*
*ພິມ ຫຼື ຂຽນຄຳຕອບຂອງທ່ານ ແລະ ໃຊ້ພື້ນທີ່ຫຼາຍເທົ່າທີ່ຕ້ອງການ).*

| ວິໄສທັດ (20%) |
|---|

1. **ຄວາມສົນໃຈ:** ກະລຸນາອະທິບາຍວ່າເປັນຫຍັງບໍລິສັດຂອງທ່ານ ສົນໃຈໃນຂໍ້ສະເໜີນີ້ ແລະ ເປັນຫຍັງການຈັດການສະຖານທີ່ທ່ອງທ່ຽວແບບທຳມະຊາດ ໃນເຂດ.................... ເໝາະກັບຍຸດທະສາດການຕະຫຼາດ ແລະການຂາຍຂອງບໍລິສັດທ່ານ (4 ຄະແນນ)

......................................................................................................
......................................................................................................
......................................................................................................
......................................................................................................

2. **ແຜນພັດທະນາການທ່ອງທ່ຽວທຳມະຊາດ:** ທ່ານສົນໃຈໃນການພັດທະນາ ແລະ ດຳເນີນທຸລະກິດທ່ອງທ່ຽວທຳມະຊາດໃນສະຖານທີ່ໃດ ? ຍ້ອນຫຍັງ ? ແຜນການພັດທະນາ ການທ່ອງທ່ຽວທາມະຊາດໃນສະຖານທີ່ນີ້ແມ່ນຫຍັງ ? ອະທິບາຍ (4 ຄະແນນ)

......................................................................................................
......................................................................................................
......................................................................................................
......................................................................................................

3. **ການລົງທຶນດ້ານໂຄງສ້າງພື້ນຖານ/ການບຳລຸງຮັກສາ ແລະອຸປະກອນ:** ບໍລິສັດຂອງທ່ານຈະລົງທຶນ ແລະຮັກສາໂຄງສ້າງພື້ນຖານໃດແດ່ (ຕົວຢ່າງ: ທາງຍ່າງ, ບ່ອນພັກເຊົາ, ບ່ອນຕັ້ງຄ້າຍ, ອຸປະກອນບ່ອນນອນ/ບ່ອນຕັ້ງແຄ້ມ, ແລະອື່ນໆ) ? ມີໂຄງສ້າງພື້ນຖານ ຫຼື ອຸປະກອນທີ່ ເຈົ້າສະເໜີໃຫ້ໝູ່ບ້ານຄູ່ຮ່ວມ ຫຼື ຮັບຜິດ ຊອບບໍ ? ອະທິບາຍ ພ້ອມທັງຄັດຕິດການອອກແບບມາພ້ອມ (4 ຄະແນນ)

......................................................................................................
......................................................................................................
......................................................................................................
......................................................................................................
......................................................................................................

4. **ການນຳໃຊ້ ແລະການປັບປຸງໂຄງສ້າງພື້ນຖານທີ່ມີຢູ່ແລ້ວ:** ມີໂຄງສ້າງພື້ນຖານຂອງເຂດປ່າໄມ້ ຫຼື ບ້ານທີ່ສະຖານທີ່ທ່ອງທ່ຽວແບບທຳມະຊາດທີ່ທ່ານວາງແຜນທີ່ຈະໃຊ້ບໍ ? ອະທິບາຍ ພ້ອມຄັດຕິດມການອອກແບບມາພ້ອມ (4 ຄະແນນ)

......................................................................................................
......................................................................................................
......................................................................................................

| ພື້ນຖານໂຄງລ່າງ | ສະເໜີແຜນທີ່ຈະປັບປຸງ | ເຫດຜົນ |
|---|---|---|
| | | |

| | | |
|---|---|---|
| | | |

5. **ການຕະຫຼາດ: ລາຄາ/ການຂາຍ/ການຈອງ:** ອະທິບາຍວ່າການບໍລິການທ່ອງທ່ຽວທີ່ທ່ານສະເໜີຈະໃຫ້ໃນເຂດປ່າໄມ້ ແລະ ລະບຸໄວ້ລາຄາຕໍ່ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ. ທ່ານສະເໜີໃຫ້ຕັ້ງລະບົບການຂາຍ ແລະ ການຈອງບໍລິການແນວໃດ ? ທ່ານສະເໜີໃຫ້ຕັ້ງຫ້ອງການຂອງທ່ານຢູ່ບ່ອນໃດ ? (4 ຄະແນນ)

   ....................................................................................................

   ....................................................................................................

   ....................................................................................................

   ....................................................................................................

6. **ໄລຍະເວລາຂອງສັນຍາ:** ທ່ານສະເຫນີສ້າງສັນຍາຮ່ວມມືການທ່ອງທ່ຽວໃນເຂດປ່າໄມ້ ຈໍານວນປີຕໍ່າສຸດເທົ່າໃດ ? (4 ຄະແນນ)

   ....................................................................................................

   ....................................................................................................

   ....................................................................................................

   ....................................................................................................

## ຜົນປະໂຫຍດຕໍ່ຊຸມຊົນ ແລະ ຫຼຸດຜ່ອນຜົນກະທົບທາງດ້ານວັດທະນະທໍາ (20%)

7. **ບ້ານຄູ່ຮ່ວມມື:** ທ່ານສະເຫນີຮ່ວມມືກັບບ້ານໃດແດ່ ? ກະລຸນາອະທິບາຍວິທີການຮ່ວມມືກັບຊຸມຊົນທີ່ຈະຮ່ວມມື ແລະ ບົດບາດຂອງຊຸມຊົນຈະເປັນແນວໃດ ? (4 ຄະແນນ)

   ..........................................................................................................................

   ..........................................................................................................................

   ..........................................................................................................................

   ..........................................................................................................................

   ..........................................................................................................................

8. **ແຮງງານຂອງຊຸມຊົນ/ຄ່າຈ້າງ:** ທ່ານສະເໜີຈ້າງພະນັກງານຈາກຊຸມຊົນ ຈໍານວນເທົ່າໃດ ເພື່ອສະໜັບສະໜູນການດໍາເນີນງານ ? ທ່ານສະເໜີໃຫ້ເລືອກເອົາ ແລະ ຈ້າງພະນັກງານຈາກຊຸມຊົນແນວໃດ ? ທ່ານສະເໜີໃຫ້ກໍານົດຄ່າຈ້າງ ຫຼື ເງິນເດືອນໃຫ້ພະນັກງານທ່ອງທ່ຽວຈາກຊຸມຊົນແນວໃດ ? ມີຜົນປະໂຫຍດອັນໃດທີ່ຈະສະໜອງໃຫ້ແກ່ພະນັກງານຈາກຊຸມຊົນ ? (4 ຄະແນນ)

   ....................................................................................................

   ....................................................................................................

   ....................................................................................................

   ....................................................................................................

   ....................................................................................................

9. **ຜົນປະໂຫຍດອື່ນຂອງຊຸມຊົນ: ມີຜົນປະໂຫຍດອື່ນທີ່**ທ່ານ**ວາງແຜນຈະສະໜອງໃຫ້ໝູ່ບ້ານຄູ່ຮ່ວມງານບໍ ? ອະທິບາຍ** (4 ຄະແນນ)

   ....................................................................................................

